# ຄວາມຮູ້ສຶກຈາກໃຈຈິງ

ໂດຍະ ສາວຫຼັກ 7 ເມັດນ້ຳຕານເມືອງສວັນ

ຂອບໃຈທຸກທົ່ວໜ້າ    ບັນດາເພື່ອນຊາວຫຼັກເຈັດ
ເຮັດໃຫ້ມີຄວາມຫວັງ    ຕື່ມພະລັງແຮງກ້າ
ຈະຂໍສັນຍາໝັ້ນ    ປະພັນກອນສືບຕໍ່
ບໍ່ວ່າໄກແລະໃກ້    ຫົວໃຈນັ້ນເພີ່ມສົ່ງມາ  ແທ້ດາຍ

ຊີວິດລອຍເລື່ອນຟ້າ    ມາຢູ່ຫຼາຍປີ
ບໍ່ເຄີຍມີສັກສີ    ກຽດສູງພຽງນີ້
ຈະທຳຄວາມດີໄວ້    ຂໍແຮງໃຈຈາກພວກທ່ານ
ຄຣູອາຈານຂ້າຍົກໄວ້    ໃຫ້ທຽມເທົ້າພໍ່ແມ່ນາງ  ທ່ານເອີຍ

ຄວາມຫວັງຄິດຢາກສ້າງ    ສະພານໄຕ່ໄປຫາ
ຊື່ສຽງດັງໃນ ໂລກາ    ຄ່າຜູ້ຍິງພຽງພ້ອມ
ຈະຖນອມຮັກສາໄວ້    ແຮງໃຈຈາກຜູ້ອ່ານ
ເປັນສະພານກ່າຍໃຫ້    ຢາກໄປໄດ້ດັ່ງຫວັງ

ອີກນຶ່ງ ຂໍເອົາຈິດຕໍ່ຕັ້ງ    ພະລັງໃສ່ທາງທັມ
ກັມອັນໃດຈະນຳມາ    ປາຖນາຂໍເວັ້ນ
ເວນອັນໃດຈະມາຂ້ອງ    ໝອງໃຈຈົນເທົ້າຊົ່ວ
ຄວາມໝອງມົວໃຫ້ຜ່ານພົ້ນ  ຄົນຮ້າຍໃຫ້ຫ່າງໜີ

ຊີວິດທຸກມື້ນີ້    ມີໃຈຕໍ່ ແຕ່ການຂຽນ
ຢາກຫຼ່ຽນໄຫຼໃນກອນ    ທຸກບ່ອນຄົນເຂົ້າຮູ້
ນາງຈຶ່ງອົດທົນສູ້    ຂຽນດູເພື່ອຜູ້ອ່ານ
ຂໍແຕ່ຄຣູອາຈານ  ເພື່ອນນັກຮຽນທົ່ວທຸກຫ້ອງ ແຮງໃຈນ້ອງຢ່າຫ່າງລາ ທ່ານເອີຍ